สาทาละนะลัด ปะຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*********************

ທະນາຄານແຫ່ງ ສ.ປ.ປ. ລາວ                                        ເລກທີ: 11/ ທຫລ

ນະຄອນຫຼວງວຽງຈັນ, ວັນທີ 30 ພະຈິກ 2007

ຄໍາແນະນໍາເພີ່ມເຕີມ

ກ່ຽວກັບການຖອນເງິນສົດ ເງິນຕາຕ່າງປະເທດ

- ອີງຕາມກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປລາວ ສະບັບເລກທີ 05/ສພຊ ລົງວັນທີ 14 ຕຸລາ 1999
- ອີງຕາມລັດຖະບັນຍັດວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າສະບັບເລກທີ 01/ສປປ, ລົງວັນທີ່ 9 ສິງຫາ 2002.
- ອີງຕາມການເຫັນດີເປັນເອກະພາບຂອງກອງປະຊຸມວິຊາການເພື່ອປຶກສາຫາລືແກ້ໄຂບັນຫາທີ່ທະນາຄານປະສົບຢູ່ໃນປະຈຸບັນ ຄັ້ງວັນທີ 29 ພະຈິກ 2007.

ຜູເະວ່າການທະນາຄານ ແຫ້ງ ສປປ ລາວ ອອກຄໍາແນະນໍາເພີ່ມເຕີມ:

1. ໃຫ້ທະນາຄານທຸລະກິດສືບຕໍ່ປະຕິບັດຄໍາແນະນໍາເລກທີ 01/ທຫລ, ລົງວັນທີ 5 ກຸມພາ 2004 ທີ່ໄດ້ກໍານົດ ຢູ່ໃນວັກ 3 ຂໍ້ 3 ຂອງຄໍາແນະນໍາດັ່ງກ່າວ ໂດຍມອບໃຫ້ທະນາຄານທຸລະກິດ ເປັນຜູ້ພິຈາລະນາອະນຸຍາດຖອນເງິນສົດເງິນຕາຕ່າງປະເທດເກີນ 10.000 ໂດລາ ຫຼື ເປັນເງິນຕາຕ່າງປະເທດສະກຸນອື່ນທຽບເທົ່າ ບົນຫຼັກການຮູ້ລູກຄ້າຂອງຕົນ (KYC)D

   ສ່ວນການລາຍງານໃຫ້ທະນາຄານແຫ່ງ ສປປ ລາວ ນັ້ນ ແມ່ນບໍ່ຈໍາເປັນຕ້ອງລາຍງານທຸກໆລາຍ ໃຫ້ລາຍງານສະເພາະລາຍການຖອນຫຼາຍຜິດປົກກະຕິ ແລະ ມີພິລຸດສົ່ງໃສເທົ່ານັ້ນ.
2. ມອບໃຫ້ທ່ານຜູ້ອໍານວຍການທະນາຄານທຸລະກິດ ສໍານັກງານໃຫ່ຍ ອອກການແຈ້ງແນະນໍາວິທີການປະຕິບັດຕົວຈິ່ງໃຫ້ສາຂາຂອງຕົນໃນທົ່ວປະເທດ ຕາມເນື້ອໃນຈິດໃຈດັ່ງກ່າວໃນຂໍ້ໜຶ່ງຂ້າງເທິງນີ້.
3. ໃຫ້ຫ້ອງການ, ກົມນະໂຍບາຍເງິນຕາ, ກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການ

ເງິນ, ບຸກຄົນ ແລະ ນິຕິບຸກຄົນກ່ຽວຂ້ອງຈົ່ງຮັບຮູ້ ແລະ ປະຕິບັດຕາມຄຳແນະນຳສະບັບນີ້ຢ່າງເຂັ້ມງວດ.

4. ຂໍ້ຕົກລົງ, ບົດແນະນຳ ແລະ ລະບຽບຫຼັກການໃດໜຶ່ງທີ່ທະນາຄານແຫ່ງ ສປປ ລາວ ໄດ້ອອກໃນເມື່ອກ່ອນທີ່ຂັດກັບຄຳແນະນຳສະບັບນີ້ລ້ວນແຕ່ຖືກຍົກເລີກ. ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ພູເພັດ ຄຳພູນວົງ